## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 22 ພຶສພາ 2022 (05-22-2022)

---

## ຮັບໃຊ້ຢ່າງສັດຊື່

*ທ່ານເຄີຍເຫັນທັສນະຄະຕິທີ່ "ບໍ່ຍອມແພ້" ສະແດງອອກເມື່ອໃດ?*

**ຈຸດສຳຄັນໃນບົດຮຽນ:** ຮັບໃຊ້ພຣະຄຣິດດ້ວຍຄວາມສັດຊື່ໃນຂະນະທີ່ທ່ານລໍຖ້າການກັບມາຄັ້ງທີສອງຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ.**

ໂມງບອກວ່າ 13:19 ໃນລອບທີສາມ, ແລະທີມ Huston Oilers ນຳໜ້າໄປກ່ອນທີມ Buffalo Bills ຫ່າງກັນຫຼາຍແລ້ວ (35-3) ຊຶ່ງແຟນກິລາກໍເລີ່ມທະຍອຍກັນອອກຈາກສເຕດຽມ. ມັນເປັນ ມົກຣາ 3,1993, ໃນບັຟໂລ, ນິວຢອກ, ສະນັ້ນເຫດໃດເຂົາຈຶ່ງພາກັນຊ້ອງຢູ່ອ້ອມແອ້ມເດີ່ນເພື່ອຈ້ອງເບິ່ງທີມຂອງຕົນຝ່າຍແພ້, ໂດຍສະເພາະເວລາອາກາດໜາວແລະຝົນຕົກ?

ແຕ່ເກມຍັງບໍ່ທັນຈົບ. ມີແຟນຂອງທີມບຽວແລ່ນເຂົ້າແລ່ນອອກ, ເພື່ອຊອມເບິ່ງບາງຢ່າງທີ່ໜ້າປະຫຼາດໃຈຫຼາຍ. ໃນເວລາຕໍ່າກວ່າເຈັດນາທີ, ທີມບຽວໄດ້ທຳຄະແນນ 27 ແຕ້ມ, ມາພ້ອມກັບສີ່ຄະແນນຂອງທີມອອຍເລີ. ແຕ່ ເກມຍັງບໍ່ທັນຈົບເທື່ອ. ເມື່ອສເມີກັນກັມມະການຈຶ່ງໄດ້ຕໍ່ເວລາ. ແລະທີມບັຟໂລບຽວໄດ້ປິດເກມຊະນະໄປ 41-38.

ດັ່ງທີ່ທ່ານໂຢກີ ແບຣາ ກ່າວວ່າ, "ມັນຍັງບໍ່ຈົບຈົນກວ່າມັນຈະຈົບ." ໃນວັນທີ່ໜາວຈັດເດືອນມົກຣາ, ແຟນຂອງທີມບຽວຫຼາຍຄົນໄດ້ປະຖິ້ມທີມຂອງເຂົາ, ແຕ່ຖ້າເຂົາຍັງຄົງສັດຊື່ແລະຊູຄໍເບິ່ງຕໍ່, ເຂົາຄົງຈະໄດ້ເຫັນການກັບມາອັນຍິ່ງໃຫຍ່ຂອງເກມກິລາຟຸດບອລ.

ສຳລັບຜູ້ຕິດຕາມພຣະຄຣິດ, "ມັນຍັງບໍ່ຈົບຈົນກວ່າມັນຈະຈົບ" ໃນການນຳເອົາການສະເດັດກັບມາຂອງພຣະຄຣິດມາໃຊ້. ພວກເຮົາໄດ້ຖືກເອີ້ນມາຮັບໃຊ້ພຣະອົງ-ແລະສືບຕໍ່ການຮັບໃຊ້ພຣະອົງ-ຈົນເທົ້າພຣະອົງເອີ້ນເຮົາກັບບ້ານ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ມັດທາຍ 24:42-44.</u>

*42 ເຫດສັນນັ້ນພວກທ່ານຈົ່ງເຝົ້າລະວັງຢູ່ ເພາະພວກທ່ານບໍ່ຮູ້ວ່າ ອົງພຣະຜູ້ເປັນເຈົ້າຂອງພວກທ່ານຈະສະເດັດມາໃນເວລາ*
*ໃດ. 43 ແຕ່ຈົ່ງເຂົ້າໃຈຢ່າງນີ້ວ່າ ຖ້າເຈົ້າຂອງເຮືອນໄດ້ຮູ້ກ່ອນວ່າໂຈນຈະມາຍາມໃດ ຕົນຈະເຝົ້າລະວັງໄວ້ບໍ່ໃຫ້ໂຈນເຈາະເຂົ້າ*
*ເຮືອນໄດ້. 44 ເຫດສັນນັ້ນພວກທ່ານກໍເໝືອນກັນ ຈົ່ງຕຽມໄວ້ໃຫ້ພ້ອມ ເພາະໃນໂມງທີ່ພວກທ່ານບໍ່ທັນຄຶດນັ້ນ ບຸດມະນຸດຈະ*
*ສະເດັດມາ."*

ຂໍ້ 42 ແມ່ນຈຸດໃຈກາງຂອງການທັນກັບຂອງພຣະເຢຊູໃນຄຳຖແລງຂອງໂອລີເວັດ. ຂ່າວສານກະຈ່າງແຈ້ງດີ: ຄົນທີ່ຍັງມີຊີວິດກ່ອນການສະເດັດກັບມາຂອງພຣະເຢຊູຕ້ອງຕຽມພ້ອມສຳລັບການກັບມາຂອງພຣະອົງ. "ຈົ່ງເຝົ້າລະວັງ" ເປັນຊ່ອງກາລເວລາປະຈຸບັນໃນພາສາກຣີກ, ຊຶ່ງໝາຍຄວາມວ່າພວກເຮົາໄດ້ຮັບຄຳສັ່ງໃຫ້ສືບຕໍ່ເຝົ້າລະວັງຢູ່. ເປັນການຮຽກເອີ້ນດ້ວຍຄວາມຄາດຫວັງໃຫ້ເຝົ້າລະວັງຕໍ່ໆໄປ.

ເຫດຜົນທີ່ພວກເຮົາຕ້ອງເຝົ້າລະວັງກໍເພາະວ່າ, "ທ່ານບໍ່ຮູ້ວ່າມື້ໃດພຣະຜູ້ເປັນເຈົ້າຂອງທ່ານຈະມາ." ພຣະຄຣິດໄດ້ຢໍ້າຄວາມຈິງກຳນົດເວລາທີ່ບໍ່ແນ່ນອນໃນການມາຂອງພຣະຜູ້ເປັນເຈົ້າທີ່ພວກເຮົາອ່ານມາໃນຂໍ້ 36. ພຣະເຢຊູໄດ້ເວົ້າເໝືອນກັນວ່າພຣະອົງຈະກັບມາ, "ໃນໂມງທີ່ທ່ານບໍ່ທັນຄິດນັ້ນ." ນີ້ແມ່ນວິທີເວົ້າວ່າບໍ່ພຽງແຕ່ພຣະຄຣິດຈະສະເດັດມາໃນໂມງທີ່ປົກປິດຈາກພວກເຮົາເທົ່ານັ້ນ, ແຕ່ຍັງຈະເປັນເວລາທີ່ເຮົາບໍ່ຄາດຄິດອີກດ້ວຍ. ດັ່ງຄຳສຸພາສິດທີ່ວ່າ, "ເວລາທ່ານຄາດຫວັງໜ້ອຍທີ່ສຸດ, ນັ້ນແຫຼະຄືເວລາຄາດຫວັງ."

*ແມ່ນຫຍັງຄືພັຍອັນຕະລາຍທີ່ບໍ່ເຝົ້າລະວັງໃນການສະເດັດມາຂອງພຣະຄຣິດ?*

ເພື່ອຈະໄດ້ພາບນີ້ຢ່າງຖືກຕ້ອງ, ພວກເຮົາຕ້ອງຈຳໄວ້ວ່າທ່າທີການເຝົ້າລະວັງຂອງຄຣິສຕຽນບໍ່ແມ່ນການເຝົ້າເບິ່ງດ້ວຍຄວາມຢ້ານກົວແລະອົກສັ່ນຂວັນເສັຍ. ມັນເປັນການລໍຄອຍຄວາມຫວັງດ້ວຍຄວາມຍິນດີສຳລັບການກັບມາຂອງຜູ້ທີ່ພວກເຮົາຮັກແລະຮັບໃຊ້. ຄຳວ່າ *ພຣະຜູ້ເປັນເຈົ້າຂອງທ່ານ* ນັ້ນສຳຄັນຫຼາຍ. ມັນດຶງຄວາມສົນໃຈຕໍ່ຄວາມເປັນຈິງທີ່ວ່າຕົວເຮົາບໍ່ແມ່ນຂອງເຮົາເອງ. ແທນທີ່ຈະເປັນແບບນັ້ນ, ມັນແມ່ນຂອງເຈົ້ານາຍແລະພຣະຜູ້ສ້າງທີ່ຈະສະເດັດມາ. ເມື່ອເຮົາຕິດຕາມພຣະເຢຊູ, ພວກເຮົາຮັບຮູ້ວ່າພຣະອົງແມ່ນພຣະຜູ້ເປັນເຈົ້າ (ໂຣມ 10:9). ພວກເຮົາເປັນຂອງພຣະອົງ. ພຣະອົງເປັນຜູ້ຄວບຄຸມ.

ພຣະເຢຊູປຽບທຽບການກັບມາຂອງພຣະອົງຄືດັ່ງໂຈນມາໃນຍາມກາງຄືນ. ໂຈນບໍ່ໄດ້ສົ່ງຈົດໝາຍມາບອກເວລາທີ່ມັນຈະມາແລະປຸ້ນເຮືອນ. ອາວຸດຫຼັກຂອງມັນຄືໃຫ້ຕົກສະເງີ້. ເຫດສັນນັ້ນ, ເຈົ້າຂອງເຮືອນຜູ້ມີຂອງມີຄ່າໃນເຮືອນຂອງຕົນຕ້ອງລະວັງຕົວຢູ່ສເມີ. ພຣະເຢຊູໄດ້ເລັງເຖິງພາກສ່ວນ "ການຕົກສະເງີ້" ເມື່ອພຣະອົງທຽບການກັບມາຂອງພຣະອົງໃສ່ການມາຂອງໂຈນ. ຄືກັນກັບຂະໂມຍ, ພຣະເຢຊູຈະບໍ່ໂຄສະນາບອກເວລາທີ່ພຣະອົງຈະມາ. ແນ່ນອນ, ມັນຈະຄ້າຍຄືຂອງພຣະຄຣິດທີ່ທຽບກັບໂຈນ.

ພວກເຮົາທຸກຄົນຕ້ອງຝຶກຫັດລະວັງໃນຊີວິດຝ່າຍວິນຍານຂອງເຮົາ. ຖ້າພວກເຮົາຖືກຫຼົງໄປໂດຍບໍ່ຮູ້ເມື່ອຕົວ, ບໍ່ແມ່ນຍ້ອນພຣະເຈົ້າບໍ່ໄດ້ເຕືອນພວກເຮົາ, ແຕ່ເພາະຄວາມເມີນເສີຍຂອງເຮົາເອງ. ພວກທີ່ເຊື່ອມີຂໍ້ແກ້ຕົວຕໍ່ຄວາມບໍ່ສົນໃຈໜ້ອຍກວ່າ "ເຈົ້າຂອງເຮືອນ" ທີ່ພຣະເຢຊູໄດ້ບັນລະຍາຍ, ຜູ້ທີ່ບໍ່ໄດ້ຮັບການແຈ້ງເຕືອນກ່ອນ. ພວກເຮົາຮູ້ແລ້ວວ່າພຣະເຢຊູຈະສະເດັດມາ, ພຽງແຕ່ບໍ່ຮູ້ວ່າເວລາໃດ.

"ບຸດມະນຸດຈະສະເດັດມາໃນໂມງທີ່ທ່ານບໍ່ທັນຄິດ." ພຣະເຢຊູມັກໃຊ້ຂໍ້ຄວາມບຸດມະນຸດເພື່ອອ້າງເຖິງພຣະອົງເອງ: ການຊີ້ໃສ່ພຣະອົງເອງບົ່ງບອກວ່າພຣະອົງແມ່ນພຣະເມຊີອາ. ເມື່ອພຣະເຢຊູໃຊ້ຫົວຂໍ້ນີ້, ພຣະອົງຖືກມອບໝາຍໃຫ້ກ່າວຄຳທຳນວາຍຈາກ ດານີເອນ 7:13-14 ເຖິງພຣະອົງເອງ. ດານີເອນໄດ້ເຫັນ "ບຸດມະນຸດ" ເປັນຜູ້ສູງສົ່ງ. ດາເອນໄດ້ທຳນວາຍເໝືອນກັນວ່າບຸດມະນຸດຈະສະເດັດມາໃນໂລກທັນທີທັນໃດ. ພວກເຮົາເຂົ້າໃຈວ່ານີ້ແມ່ນພຣະເຢຊູ, ຜູ້ທີ່ດຽວນີ້ບອກເຖິງການສະເດັດກັບມາທັນທີທັນໃດຂອງພຣະອົງ, ໃນເວລາທີ່ບໍ່ຄາດຄິດ.

## 2. <u>ມັດທາຍ 24:45-47</u>.

*[45]"ເຫດສັນນັ້ນຜູ້ໃດເປັນຂ້າໃຊ້ສັດຊື່ແລະສລາດ ທີ່ນາຍໄດ້ຕັ້ງໄວ້ໃຫ້ເປັນໃຫຍ່ເໜືອພວກຄົນໃຊ້ໃນເຮືອນຂອງຕົນ ເພື່ອແຈກອາຫານໃຫ້ເຂົາຕາມເວລາ. [46]ເມື່ອນາຍມາພົບຂ້າໃຊ້ຜູ້ນັ້ນກຳລັງເຮັດຢ່າງນັ້ນຢູ່ ມັນກໍເປັນສຸກ. [47]ເຮົາບອກພວກທ່ານຕາມຄວາມຈິງວ່າ ນາຍຈະຕັ້ງຜູ້ນັ້ນໄວ້ເໜືອບັນດາເຂົ້າຂອງໆ ຕົນ.*

ການລະວັງແລະຕຽມພ້ອມໃນການສະເດັດມາຂອງພຣະຄຣິດຮຽກຮ້ອງຄວາມສັດຊື່. ພຣະຄຣິດໃຊ້ຮູບພາບທີ່ຄຸ້ນເຄີຍໃນຄອບຄົວຂອງນາຍແລະຜູ້ຮັບໃຊ້ເພື່ອດຶງດູດຄວາມສົນໃຈຂອງພວກສາວົກກ່ຽວກັບຄວາມສຳຄັນຂອງການຍຶດໝັ້ນໃນຄວາມສັດຊື່, ແລະຖານະຜູ້ຕິດຕາມພຣະຄຣິດ, ພວກເຮົາເປັນຜູ້ຮັບໃຊ້ພຣະອົງ. ເວລາພວກເຮົາຮູ້ພຣະເຢຊູຖານະພຣະຜູ້ເປັນເຈົ້າ,

ພວກເຮົາສຳນຶກໄດ້ວ່າພວກເຮົາເປັນຂອງພຣະອົງ. ພວກເຮົາເປັນຜູ້ຮັບໃຊ້ພຣະອົງ, ດັ່ງນັ້ນ, ພວກເຮົາຈຶ່ງຕ້ອງໄດ້ຮັບໃຊ້ພຣະອົງໃນທຸກວິທີທາງ.

ຮູບພາບຜູ້ຮັບໃຊ້ທີ່ສລາດແລະສັດຊື່ສະທ້ອນໃຫ້ເຫັນຫຼັກຄຳສອນທີ່ວ່າພວກເຮົາສົມຄວນຕຽມພ້ອມສຳລັບການສະເດັດກັບມາຂອງພຣະອົງ. ຄວາມພ້ອມນັ້ນລວມເຖິງຄວາມສັດຊື່ຂອງເຮົາທີ່ຈະພົບເຫັນເຮົາເຮັດໃນສິ່ງທີ່ເຮົາຖືກເອີ້ນໃຫ້ເຮັດໃນເວລາທີ່ພຣະຄຣິດສະເດັດກັບມາ. ຊີວິດ, ລົມຫາຍໃຈ, ເຫື່ອແຮງ, ແລະພອນສວັນຂອງຜູ້ເຊື່ອແມ່ນສິ່ງທີ່ພຣະເຈົ້າມອບໃຫ້ເພື່ອນຳໄປໃຊ້ໃນການຮັບໃຊ້ພຣະອົງ. ຜູ້ຮັບໃຊ້ໃນຄຳອຸປມານີ້ບໍ່ແມ່ນທັມມະດາ. ສ່ວນຫຼາຍຜູ້ປົກ-ຄອງເຮືອນ-ທີ່ດີ-ມັກມີຄົນຮັບໃຊ້ທີ່ເປັນຜູ້ຈັດການທີ່ດີສເມີ. ສ່ວນນຶ່ງຂອງສິ່ງທີ່ພຣະເຈົ້າມອບໝາຍໃຫ້ພວກເຮົາແມ່ນ "ການດູແລ" ຊີວິດຄົນອື່ນແລະຄວາມຮັບຜິດຊອບທີ່ຈະຮັກຄົນອື່ນໂດຍບໍ່ມີການເຫັນແກ່ຕົວ. ພຣະຄຣິດຮຽກຮ້ອງເຮົາໃຫ້ສັດຊື່ຕໍ່ສິ່ງທີ່ພຣະອົງມອບໃຫ້ເຮົາ. ຜູ້ຮັບໃຊ້ທີ່ສະຫຼາດຂອງພຣະຄຣິດຍ່ອມເຫັນເຖິງການຟັງຄວາມສເມີ ນັ້ນແມ່ນໜ້າທີ່ສຳຄັນປະການແລກ.

ນາຍຈະກັບມາແນ່ນອນໃນເວລາໃດເວລານຶ່ງ. ຜູ້ຮັບໃຊ້ຈະຮັກສາບົດບາດຄວາມພ້ອມແລະຄວາມສັດຊື່ຕໍ່ໜ້າທີ່ຂອງລາວ. ຜົນຕອບແທນ, ນາຍຈະມອບເຂົ້າຂອງທຸກສິ່ງທີ່ຕົນມີໃຫ້ຂ້າໃຊ້ທີ່ສັດຊື່ດູແລເພາະຂ້າໃຊ້ເປັນຄົນສັດຊື່ຕໍ່ເຂົ້າຂອງຂອງຕົນ. ຕໍ່ມາໜ້ອຍນຶ່ງໃນບົດນີ້, ພຣະເຢຊູຈະຍົກຄຳອຸປມາເຣື່ອງເງິນຕາລັນຕົນ (ມັດທາຍ 25:14-30). ບໍ່ວ່າເຮົາຈະໄດ້ຮັບໜ້ອຍຫຼືຫຼາຍ, ພວກເຮົາຕ້ອງໃຊ້ສິ່ງທີ່ພຣະອົງປະທານໃຫ້ເຮົາເພື່ອຮາຊອານາຈັກຂອງພຣະອົງ.

*ຜູ້ໃດແດ່ທີ່ທ່ານເຫັນວ່າເປັນຂ້າໃຊ້ທີ່ສັດຊື່ແລະສລາດ?*

**3. ມັດທາຍ 24:48-51.**

*48 ແຕ່ຖ້າຂ້າໃຊ້ຜູ້ນັ້ນຊົ່ວແລະຄຶດວ່າ 'ນາຍຂອງເຮົາມາຊັກຊ້າດອກ', 49 ແລ້ວຈຶ່ງຕັ້ງຕົ້ນທຸບຕີເພື່ອນຂ້າໃຊ້ດ້ວຍກັນ ທັງກິນ
ແລະດື່ມນຳຄົນຂີ້ເຫຼົ້າ, 50 ນາຍຂອງຂ້າໃຊ້ຜູ້ນັ້ນຈະມາໃນວັນທີ່ມັນບໍ່ຄຶດ ແລະໃນໂມງທີ່ມັນບໍ່ຮູ້. 51 ແລະຈະຜ່າມັນໃຫ້ເປັນສອງ
ຕ່ອນ ທັງຈະໃຫ້ເຂົ້າສ່ວນກັບຄົນໜ້າຊື່ໃຈຄົດ ບ່ອນນັ້ນຈະມີການຮ້ອງໄຫ້ແລະຂົບແຂ້ວຢູ່."*

ຂ້າໃຊ້ສັດຊື່ບົດນີ້ກົງກັນຂ້າມກັບຂ້າໃຊ້ຊົ່ວ. ຂນະທີ່ຂ້າໃຊ້ຜູ້ສັດຊື່ຕັ້ງໜ້າຕຽມພ້ອມໃນການກັບມາຂອງນາຍ, ຂ້າໃຊ້ຊົ່ວສວຍໂອກາດ, ຄິດວ່ານາຍຈະມາຊ້າ. ຂ້າໃຊ້ຊົ່ວອາດຄິດວ່າ, "ນາຍອາດເລື່ອນເວລາອອກໄປ." ຄວາມຄິດຢ່າງນັ້ນກະຕຸ້ນໃຫ້ຂ້າໃຊ້ເອົາປຽບຄົນອື່ນ. ແລ້ວຂ້າໃຊ້ຄົນນັ້ນກໍ "ເລີ້ມຂົ່ມເຫັງຕີເພື່ອນຂ້າໃຊ້ດ້ວຍກັນ, ທັງກິນແລະດື່ມນຳຄົນຂີ້ເຫຼົ້າ" (ຂໍ້ 49). ໃນເມື່ອລາວຄິດວ່ານາຍຂອງລາວຈະຫາຍໄປຊົ່ວຂນະ, ລາວຈຶ່ງປ່ອຍຕົວໄປຕາມໃຈປາຖນາ.

*ມັນຈະເປັນຄືແນວໃດໃນການດຳເນີນຊີວິດເພື່ອຕົວເອງແທນທີ່ຈະດຳເນີນຊີວິດເພື່ອພຣະຄຣິດ?*

ແນ່ນອນຂ້າໃຊ້ຊົ່ວຊ້າຢ່າງນັ້ນຕ້ອງວາງແຜນທຳຄວາມສະອາດຕົວເອງໃນວິນາທີສຸດທ້າຍກ່ອນທີ່ນາຍຈະກັບມາ. ແຕ່ການເຄື່ອນໄຫວທີ່ຊຸ່ມສ່ຽງນີ້ເປັນອັນຕະລາຍແລະອາດເປັນຜົນໃຫ້ຂ້າໃຊ້ຕິດກັບດັກໄດ້ໂດຍງ່າຍ. ນີ້ຈະເປັນກໍລະນີທີ່ໂສກເສົ້າກັບຄົນຈຳນວນຫຼາຍເວລາພຣະຄຣິດສະເດັດກັບມາ.

ຂ້າໃຊ້ຊົ່ວເປັນຂ້າໃຊ້ໃນນາມເທົ່ານັ້ນ. ລາວບໍ່ຫົວຊານຳຄຳແນະນຳນາຍຂອງລາວແລະຖືສິດອຳນາດຂອງຕົນເອງ. ພວກເຮົາຖືກເອີ້ນໃຫ້ເຊື່ອຟັງແລະຮັບໃຊ້ພຣະເຈົ້າ, ແຕ່ຂ້າໃຊ້ຊົ່ວມັກຈະມີຮູບພາບຄ້າຍກັບຄົນບໍ່ເຊື່ອທີ່ປະຕິເສດການເອົາຈິງກັບການຮຽກເອີ້ນໃຫ້ຕິດຕາມ, ຟັງຄວາມ, ແລະຮັບໃຊ້. ເຖິງແມ່ນວ່າຄົນເຫຼົ່ານັ້ນເປັນຄົນທີ່ບໍ່ເຊື່ອ, ເຖິງຢ່າງໃດກໍຕາມເຂົາຍັງຕ້ອງຮັບຜິດຊອບຕໍ່ພຣະຄຣິດສຳລັບການບໍຣິຫານເວລາ, ຂອງປະທານ, ແລະໂອກາດທີ່ພຣະເຈົ້າມອບໃຫ້.

ຄວາມຈິງຂ້າໃຊ້ຊົ່ວແມ່ນຄົນບໍ່ເຊື່ອຈິງ, ໄດ້ຖືກເນັ້ນໂດຍພຣະຄຣິດມອບໝາຍໃຫ້ຂ້າໃຊ້ຄົນນີ້ເຂົ້າສູ່ການພິພາກສາແລະນາຣົກໃນຂໍ້ 51. ໃນເມື່ອຄຳວ່ານາຣົກບໍ່ຖືກນຳໃຊ້ໃນຂໍ້ນີ້, ແນວຄວາມຄິດແມ່ນປະຈຸບັນ. ຮູບພາບພິພາກສາເປັນພາບທີ່ຮ້າຍແຮງ. ທ່ານມັດທາຍໄດ້ອະທິບາຍການພິພາກສານີ້ວ່າ "ເປັນບ່ອນເຂົ້າສ່ວນກັບຄົນໜ້າຊື່ໃຈຄົດ, ບ່ອນທີ່ຈະມີການຮ້ອງໄຫ້

ແລະຂົບແຂ້ວຢູ່."

ນາຣົກເປັນຫົວຂໍ້ເຮັດໃຫ້ບໍ່ສະບາຍໃຈ, ແຕ່ພວກເຮົາບໍ່ສາມາດປະຕິເສດບ່ອນນີ້ໃນພຣະທັມຂອງພຣະເຈົ້າ. ພວກເຮົາຄວນຮັບຮູ້ວ່າການພິພາກສາ, ການທໍລະມານ, ແລະການລົງໂທດລໍຄົນທີ່ຢູ່ນອກຄວາມສັມພັນກັບພຣະຄຣິດ. ດ້ວຍການຮັບຮູ້ນັ້ນ, ຄວນຈະເກີດໃຫ້ມີຄວາມປາຖນາແລະແຮງຈູງໃຈຊີ້ໃຫ້ຄົນໄປຫາພຣະຄຣິດ. ຖານະຂ້າໃຊ້ຂອງພຣະອົງ, ນຶ່ງໃນໜ້າທີ່ຂອງເຮົາແມ່ນການປະກາດຂ່າວປະເສີດແລະຊີ້ທາງໃຫ້ຜູ້ບໍ່ເຊື່ອສູ່ຄວາມຫວັງ, ພຣະຄຸນ, ແລະຄວາມພົ້ນຊຶ່ງຈະພົບໃນພຣະຄຣິດເທົ່ານັ້ນ. ໃຫ້ເຮົາພາກັນເຮັດໃນຂນະທີ່ສາມາດເຮັດໄດ້ເພາະວ່າບໍ່ມີຜູ້ໃດໃນພວກເຮົາຮູ້ວ່າເມື່ອໃດພຣະຄຣິດຈະສະເດັດກັບມາ. ເມື່ອພຣະອົງສະເດັດກັບມາ, ໂອກາດທີ່ເຮົາຈະແບ່ງປັນພຣະຄຣິດກັບຄົນອື່ນຈະໝົດໄປ- ແລະໂອກາດທີ່ເຂົາຈະຮັບເອົາພຣະອົງກໍຈະໝົດໄປເໝືອນກັນ.

*ກຸ່ມຂອງເຮົາສາມາດຊ່ອຍກັນຕຽມພ້ອມແນວໃດສໍາລັບການສະເດັດກັບມາຂອງພຣະຄຣິດ?*

## ນໍາໃຊ້ໃນຊີວິດ

ພວກເຮົາຕ້ອງຮັບໃຊ້ຢ່າງສັດຊື່ຂນະທີ່ລໍຖ້າການກັບມາຂອງພຣະອົງ. ຈົ່ງເລືອກການນໍາໃຊ້ໃນຊີວິດອັນໃດອັນນຶ່ງຕໍ່ລົງໄປນີ້:

- **ຈົ່ງອະທິຖານ:** ຈົ່ງຕັ້ງໃຈອະທິຖານສະເພາະແລະປະຈໍາສໍາລັບການຮັບໃຊ້ໃນໂບດຂອງທ່ານ ຫຼືໃນເມືອງຂອງທ່ານທີ່ແບ່ງປັນຂ່າວປະເສີດແລະຮັບໃຊ້ຄົນໃນພຣະນາມຂອງພຣະຄຣິດ. ອ້ອນວອນພຣະຜູ້ເປັນເຈົ້າເປີດປະຕູແລະຫົວໃຈເພື່ອນໍາຄົນມາຫາພຣະຄຣິດ (ໂກໂລຊາຍ 4:3).
- **ຈົ່ງອ່ານ.** ໃນການເພີ້ມເວລາເພື່ອພຣະທັມພຣະເຈົ້າ, ອ່ານປຶ້ມທີ່ດີເດັ່ນຂອງຄຣິສຕຽນໃນການຮັບໃຊ້ ຫຼືປ່າວປະກາດ. *The Master Plan of Evangelism by Robert Coleman or Radical by David Platt* ເປັນຄໍາແນະນໍາທີ່ດີ. ປຶ້ມເຊັ່ນນີ້ສາມາດຂຍາຍຄວາມຄິດຂອງທ່ານແລະໃຫ້ວິສັຍທັດທີ່ດີສໍາລັບສິ່ງຜົນດີຕໍ່ໂລກເພື່ອພຣະຄຣິດ.
- **ຈົ່ງແບ່ງປັນ.** ຈົ່ງບົ່ງຊື່ຄົນນຶ່ງທີ່ທ່ານຕ້ອງອະທິຖານຢາກໄດ້ເປັນເພື່ອນແລະແບ່ງປັນຂ່າວປະເສີດໃນເດືອນນີ້. ຈົ່ງອະທິຖານດ້ວຍຕົວທ່ານເອງສິ່ງທີ່ທ່ານໂປໂລອະທິຖານໃນຄຸກ*: "ແລະອ້ອນວອນສໍາລັບຂ້າພະເຈົ້າດ້ວຍ ເພື່ອຈະຊົງໂຜດໃຫ້ຂ້າພະເຈົ້າເກີດໃຈກ້າຫານ ອອກປາກສະແດງຂໍ້ລັບເລິກເຣື່ອງຂ່າວປະເສີດ (ເອເຟໂຊ 6:19).*

ພວກເຮົາບໍ່ມີໂມງຫຼືຕາໄຮມາດເພື່ອຈະແບ່ງປວັດສາດຫຼືຊີວິດຂອງພວກເຮົາ. ສະນັ້ນ ເຮົາຕ້ອງເຝົ້າລະວັງຢູ່ທຸກມື້ ຈົນກວ່າພຣະຄຣິດຈະກັບມາເອົາເຮົາກັບບ້ານ. ຈົ່ງໃຫ້ເຮົາພາກັນເປັນຄົນສັດຊື່.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**